ເລກທີ 0204(ອຈ)/913

ສໍານັກງານສົ່ງເສີມການຄ້າລະຫວ່າງປະເທດ
ສະຖານເອກອັກຄະຣາດຊະທູດໄທ
ເຮືອນເລກທີ 028 ບ້ານໂພນໄຊ, ເມືອງໄຊເສດຖາ
ນະຄອນຫລວງວຽງຈັນ, ສປປ ລາວ

ນະຄອນຫລວງວຽງຈັນ, ວັນທີ 14 ທັນວາ 2015

ຮຽນ ທ່ານຫົວໜ້າຫ້ອງການກະຊວງອຸດສາຫະກໍາ ແລະ ການຄ້າ

ເລື່ອງ ແຈ້ງຄວາມຄືບໜ້າເລື່ອງການປະກາດໃຊ້ພະຣາດຊະບັນຍັດການສົ່ງອອກໄປນອກ ແລະ ການນໍາເຂົ້າມາ ໃນຣາຊະອານາຈັກຊຶ່ງສິນຄ້າ (ສະບັບທີ 2) ພ.ສ. 2558

- ອີງຕາມໜັງສືສໍານັກງານສົ່ງເສີມການຄ້າລະຫວ່າງປະເທດ, ສະຖານເອກອັກຄະຣາດຊະທູດ ແຫ່ງ ຣາຊອານາຈັກໄທປະຈໍາ ສປປ ລາວ ສະບັບເລກທີ 0204(ອຈ)/830 ລົງວັນທີ 12 ພະຈິກ 2015

ສໍານັກງານສົ່ງເສີມການຄ້າລະຫວ່າງປະເທດ, ສະຖານເອກອັກຄະຣາດຊະທູດ ແຫ່ງ ຣາຊະອານາຈັກໄທ ປະຈໍາ ສປປ ລາວ ຂໍສະແດງຄວາມນັບຖື ແລະ ຂໍຖືເປັນກຽດຮຽນວ່າ: ຕາມໜັງສືທີ່ອ້າງເຖິງ, ສໍານັກງານ ໄດ້ແຈ້ງ ກ່ຽວກັບບັນຫາການກໍານົດໃຫ້ມັນຕົ້ນ, ຜະລິດຕະພັນມັນຕົ້ນ ແລະ ແປ້ງມັນຕົ້ນ ເປັນສິນຄ້າຫ້າມນໍາຜ່ານດິນແດນ ຣາຊະອານາຈັກໄທຕາມພະຣາດຊະບັນຍັດການສົ່ງອອກໄປນອກ ແລະ ການນໍາເຂົ້າມາໃນຣາຊະອານາຈັກ ຊຶ່ງສິນຄ້າ (ສະບັບທີ 2) ພ.ສ. 2558 ນັ້ນ

ກົມການຄ້າຕ່າງປະເທດ, ກະຊວງພານິດ ໃນຖານະເປັນໜ່ວຍງານຮັບຜິດຊອບໄດ້ຊີ້ແຈງລາຍລະອຽດ ຂອງພະຣາດຊະບັນຍັດດັ່ງກ່າວເພີ່ມເຕີມ ດັ່ງນີ້:

1. ສິນຄ້າທີ່ມີມາດຕະການຫ້າມນໍາເຂົ້າ ຫລື ຫ້າມສົ່ງອອກ ຫລື ສິນຄ້າທີ່ຈໍາເປັນຕ້ອງຫ້າມນໍາຜ່ານດ້ວຍ ເຫດຜົນສະເພາະ, ກົມການຄ້າຕ່າງປະເທດຢູ່ລະຫວ່າງການສະເໜີຄະນະລັດຖະມົນຕີພິຈາລະນາໃຫ້ຄວາມເຫັນດີ ຮ່າງປະກາດ ຈໍານວນ 2 ສະບັບ ປະກອບດ້ວຍ:

1.1 ຮ່າງປະກາດກະຊວງພານິດ ເລື່ອງ: ກໍານົດໃຫ້ສິນຄ້າທີ່ມີມາດຕະການນໍາເຂົ້າ ຫລື ສົ່ງອອກເປັນ ສິນຄ້າທີ່ຕ້ອງຫ້າມໃນການນໍາຜ່ານຣາຊະອານາຈັກ ພ.ສ……ເຊິ່ງຈະຫ້າມນໍາຜ່ານສິນຄ້າ 8 ລາຍການ ໄດ້ແກ່: (1) ສິນຄ້າປອມ/ຮຽນແບບເຄື່ອງໝາຍການຄ້າ; (2) ສິນຄ້າລະເມີດລິຂະສິດ; (3) ເຄື່ອງຫລິ້ນເກມ (4) ບາຣາກູ່; (5) ວັດຖຸບູຮານ; (6) ພະພຸດທະຮູບ ແລະ ເທວະຮູບ; (7) ຊ້າງ ແລະ (8) ສານກາເຟອີນ

1.2 ຮ່າງປະກາດກະຊວງພານິດ ເລື່ອງ: ກໍານົດໃຫ້ສິນຄ້າທີ່ມີມາດຕະການຄວ່ຳບາດຕາມມະຕິ ຄະນະມົນຕີຄວາມໝັ້ນຄົງແຫ່ງສະຫະປະຊາຊາດ ເປັນສິນຄ້າທີ່ຕ້ອງຫ້າມໃນການນໍາຜ່ານຣາຊະອານາຈັກ ພ.ສ…… ລວມມີ 9 ປະເທດ ໂດຍມີເຫດຜົນເພື່ອຄວາມໝັ້ນຄົງ, ສິລະທໍາອັນດີງາມຂອງປະຊາຊົນ, ຊີວິດ ແລະ ສຸຂະພາບ ຂອງມະນຸດ, ສິລະປະວັດທະນະທໍາ, ປະຫວັດສາດ ຫລື ຄ່ານິຍົມທາງບູຮານຄະດີ ຫລື ຊັບສິນທາງການຄ້າ ຫລື ອຸດສາຫະກໍາຂອງປະເທດ

2. ສໍາລັບການຈັດລະບຽບການນໍາຜ່ານສິນຄ້າອື່ນໆ ເຊັ່ນ: ໄມ້ ແລະ ໄມ້ແປຮູບ, ມັນຕົ້ນ ລວມທັງສິນຄ້າ ກະສິກໍາ 22 ລາຍການທີ່ຕ້ອງເປີດຕະຫລາດຕາມຂໍ້ຜູກພັນຂອງ WTO ເຊັ່ນ: ເຂົ້າ, ນໍ້າມັນປາມ, ສາລີລ້ຽງສັດ, ຜັກຫອມບົ່ວຫົວໃຫຍ່, ຜັກທຽມ, ນົມ ແລະ ນໍ້າຕານ ເຊິ່ງເປັນສິນຄ້າທີ່ບໍ່ຢູ່ໃນລາຍການສິນຄ້າຫ້າມນໍາເຂົ້າ ຫລື ຫ້າມສົ່ງອອກ ແລະ ໃນຫລັກການຄວນນໍາຜ່ານໄດ້ ນັ້ນ ປະຈຸບັນຢູ່ໃນຂັ້ນຕອນລໍຖ້າການພິຈາລະນາຂອງຄະນະ

ກຳມະການທີ່ຮັບຜິດຊອບສິນຄ້າດັ່ງກ່າວ ເພື່ອກຳນົດມາດຕະການກຳກັບດູແລທີ່ເໝາະສົມກັບແຕ່ລະສິນຄ້າ ເຊັ່ນ: ຕ້ອງມີໃບຮັບຮອງຖິ່ນກຳເນີດສິນຄ້າ (C/O), ໃບຮັບຮອງສຸຂະອະນາໄມພືດ ຫລື ການກຳນົດດ່ານນຳເຂົ້າ-ສົ່ງອອກ ເປັນຕົ້ນ ເນື່ອງຈາກເປັນສິນຄ້າອ່ອນໄຫວ ເຊິ່ງອາດຈະສົ່ງຜົນກະທົບຕໍ່ຊາວກະສິກອນ ຫລື ກະທົບຕໍ່ເສດຖະກິດຂອງປະເທດ ໂດຍຈະຄັດຈ້ອນນຳສະເໜີຄະນະລັດຖະມົນຕີພິຈາລະນາອອກປະກາດພາຍຫລັງ

3. ໃນຊ່ວງເວລາທີ່ປະກາດຕາມຂໍ້ 1 ແລະ ຂໍ້ 2 ຍັງບໍ່ມີຜົນບັງຄັບໃຊ້ໃນວັນທີ 14 ທັນວາ 2015. ການນຳຜ່ານສິນຄ້າທີ່ມີມາດຕະການນຳເຂົ້າ-ສົ່ງອອກຕາມປະກາດກະຊວງພານິດ ສາມາດດຳເນີນການໄດ້ພາຍໃຕ້ການກຳກັບດູແລຂອງກົມສຸລະກາກອນ ໂດຍຜູ້ນຳຜ່ານສິນຄ້າຈະຕ້ອງປະຕິບັດຕາມປະກາດກົມສຸລະກາກອນທີ 210/2558 ເລື່ອງ: ພິທີການສຸລະກາກອນວ່າດ້ວຍການຜ່ານແດນ ແລະ ປະກາດກົມສຸລະກາກອນ ທີ 211/2558 ເລື່ອງ: ພິທີການສຸລະກາກອນວ່າດ້ວຍການຖ່າຍລຳ ແລະ ເມື່ອມີປະກາດກະຊວງພານິດອອກມາໃຊ້ບັງຄັບ ຜູ້ນຳຜ່ານສິນຄ້າຈຶ່ງຈະຕ້ອງປະຕິບັດຕາມເງື່ອນໄຂທີ່ປະກາດກະຊວງພານິດກຳນົດ

ສະນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ຫາກມີຄວາມຄືບໜ້າປະການໃດ ຈະແຈ້ງໃຫ້ຊາບເພີ່ມເຕີມໃນໂອກາດຕໍ່ໄປ

ຂໍສະແດງຄວາມນັບຖື

ອັກຄະຣາດຊະທູດທີ່ປຶກສາ (ຝ່າຍການຄ້າ)

OFFICE OF COMMERCIAL AFFAIRS
ROYAL THAI EMBASSY VIENTIANE

ພິມົນ ປິ່ງກອງແກ້ວ

ສຳນັກງານສົ່ງເສີມການຄ້າລະຫວ່າງປະເທດ
ໂທ 021-413 704
ໂທລະສານ 021-412 089
E-mail: vtditp@hotmail.com

....................ร่าง
....................พิมพ์/ทาน
....................ตรวจ